# ຊົມເຊີຍລາງວັນ



## ທະນາຄານດີເດັ່ນພາຍໃນແຫ່ງປີ 2017

## (ຫຼື Domestic Retail Bank of The Year 2017)

ວາລະສານການທະນາຄານແລະການເງິນອາຊີ (Asian Banking and Finance Magazine) ມອບ 1 ລາງວັນດີເດັ່ນໃຫ້ແກ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນງານປະກາດລາງວັນດ້ານການທະນາຄານ ແລະ ການເງິນອາຊີ ປະຈຳປີ 2017 (Asian Banking & Finance Awards 2017) ທີ່ຈັດຂຶ້ນໃນຄ່ຳຄືນຂອງວັນທີ 13 ກໍລະກົດ 2017 ຢູ່ທີ່ໂຮງແຮມຊາງກຣີລາ, ປະເທດ ສິງກະໂປ.

ລາງວັນທີ່ ທຄຕລ ໄດ້ຮັບແມ່ນມາຈາກຂະແໜງ ທະນາຄານບໍລິການລູກຄ້າທົ່ວໄປ ປີ 2017 (ຫຼື Retail Banking Awards 2017) ເຊິ່ງລາງວັນອັນຊົງກຽດທີ່ ທຄຕລ ໄດ້ຮັບຈາກປະເພດ **ລາງວັນທະນາຄານດີເດັ່ນພາຍໃນ ແຫ່ງປີ 2017** (ຫຼື Domestic Retail Bank of the Year) ເຊິ່ງ ທຄຕລ ເປັນທະນາຄານພຽງແຫ່ງດຽວໃນ ສປປ ລາວ ທີ່ໄດ້ຮັບລາງວັນອັນຊົງກຽດ ດັ່ງກ່າວ. ສຳລັບລາງວັນປະເພດນີ້ມີ 63 ທະນາຄານຈາກ 23 ປະເທດ ທີ່ໄດ້ຮັບລາງວັນໃນປີນີ້. ສຳລັບລາງວັນ ທະນາຄານດີເດັ່ນພາຍ ໃນແຫ່ງປີ ທຄຕລ ໄດ້ຮັບມາ 5 ປີຕິດຕໍ່ກັນນັບແຕ່ປະຈຳປີ 2012 ເປັນຕົ້ນມາ. ລາງວັນທີ່ ທຄຕລ ໄດ້ຮັບໃນເທື່ອນີ້ເປັນສິ່ງທີ່ຢັ້ງຢືນ ເຖິງຄຸນນະພາບໃນການບໍລິການຂອງ ທຄຕລ ແລະ ການຍອມຮັບຂອງສາກົນຕໍ່ ທຄຕລ ໄດ້ເປັນຢ່າງດີ.

ການສະເໜີຊື່ທະນາຄານເພື່ອເຂົ້າຮັບລາງວັນ ແລະ ການຕັດສິນ ແມ່ນພິຈາລະນາໂດຍຄະນະກຳມະການ ທີ່ມາຈາກບັນດາບໍລິສັດ ກວດສອບບັນຊີທີ່ມີຊື່ສຽງລະດັບສາກົນ ອັນປະກອບດ້ວຍຕົວແທນຈາກ: ບໍລິສັດ Ernst & Young, Deloitte, KPMG ແລະ PwC.




ທ່ານ ພັນຊະນະ ຄູນນຸວົງ, ຮອງຜູ້ອຳນວຍການໃຫຍ່ ທຄຕລ, ພ້ອມດ້ວຍ ທ່ານ ບຸນລ້ອນ ອຸ່ນລະທະວົງ, ຫົວໜ້າພະແນກ R&D, ຕາງໜ້າ ທຄຕລ ເຂົ້າຮ່ວມຮັບລາງວັນອັນຊົງກຽດດັ່ງກ່າວ ຈາກທ່ານ Tim Charlton, ສຳນັກພິມວາລະສານການທະນາຄານ&ການເງິນອາຊີ